ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຈຳປາສັກ

ເລກທີ...01......../ຈຂ.ຈສ
ແຂວງຈຳປາສັກ, ວັນທີ...14.....ມິຖຸນາ 2017

# ຄຳແນະນຳ
## ວ່າດ້ວຍ ການຄຸ້ມຄອງນາງສາວຈຳປາສັກ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4 ວ່າດ້ວຍພາລະບົດບາດ ສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 91/ສພຊ, ລົງວັນທີ 12 ກໍລະກົດ 2012.
- ອີງຕາມ ໜັງສືສະເໜີຂອງພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສະບັບເລກທີ 387/ຖວທ.ຈສ, ລົງວັນທີ 08/05/2017.
- ອີງໃສ່ຄວາມເຫັນດີເປັນເອກະພາບ ໃນກອງປະຊຸມປົກສາຫາລື ຄັ້ງວັນທີ 04/06/2015 ທີ່ສຳນັກງານຫ້ອງວ່າການແຂວງ ກ່ຽວກັບການຄົ້ນຄວ້າລະບຽບການຄັດເລືອກ, ການປະກວດ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງນາງສາວຈຳປາສັກ.

**ເຈົ້າແຂວງໆ ຈຳປາສັກ ອອກຄຳແນະນຳ ດັ່ງນີ້:**

**ມາດຕາ 1 ວ່າດ້ວຍຈຸດປະສົງ.**

- ເພື່ອເປັນການອະນຸລັກ ແລະ ສົ່ງເສີມວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຄົນລາວ, ໂດຍສະເພາະແມ່ນວັດທະນະທຳ ທີ່ເປັນເອກະລັກອັນໂດດເດັ່ນ, ຄຸນສົມບັດ, ມາລະຍາດ ແລະ ຄວາມສະຫງ່າງາມຄ່ຽມຄົມ ຂອງແມ່ຍິງລາວ.
- ເພື່ອເປັນການໂຄສະນາເຜີຍແຜ່, ສົ່ງເສີມບົດບາດ ຄວາມສາມາດ ຄວາມກ້າຫານ ຄວາມກ້າສະແດງອອກຂອງແມ່ຍິງລາວ ຊາວແຂວງຈຳປາສັກ ໃນເວທີສັງຄົມລະດັບທ້ອງຖິ່ນ, ກ້າວໄປສູ່ລະດັບຊາດ, ລະດັບພາກພື້ນ ແລະ ສາກົນໃນຕໍ່ໜ້າ.
- ເພື່ອຄວາມເປັນເອກະພາບ ແລະ ເປັນບ່ອນອີງໃຫ້ແກ່ທຸກພາກສ່ວນ ໃນຂອບເຂດທົ່ວແຂວງຈຳປາສັກ ກ່ຽວກັບມາດຕະຖານ ເງື່ອນໄຂໃນການຄັດເລືອກ, ການປະກວດ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງນາງສາວຈຳປາສັກ.

**ມາດຕາ 2 ວ່າດ້ວຍຊື່ຂອງນາງສາວຈຳປາສັກ.**

ນາງສາວທີ່ຜ່ານການປະກວດຮອບສຸດທ້າຍ ຈຳນວນ 07 ຄົນ(ນັບແຕ່ອັນດັບທີ 1 ຫາ ອັນດັບທີ 7) ເອີ້ນວ່າ: ນາງສາວຈຳປາສັກ.

**ມາດຕາ 3 ວ່າດ້ວຍມາດຕະຖານການຄັດເລືອກ ນາງສາວຈຳປາສັກ.**

ຜູ້ທີ່ຈະເຂົ້າປະກວດນາງສາວຈຳປາສັກ ຕ້ອງມີມາດຕະຖານ ດັ່ງນີ້:

- ມີສັນຊາດລາວ.
- ເປັນເພດຍິງໂດຍກຳເນີດ.
- ມີຄວາມສູງ 160 ຊັງຕີແມັດ ຂຶ້ນໄປ.
- ມີອາຍຸແຕ່ 18-25 ປີ.
- ບໍ່ເຄີຍໄດ້ຮັບຕຳແໜ່ງ ຈາກການປະກວດລະດັບແຂວງ ຫຼື ລະດັບຊາດ ມາກ່ອນ.
- ມີບຸກຄະລິກດີ, ມີຄວາມຮູ້ຄວາມສາມາດ, ມີມະນຸດສຳພັນດີ.
- ເປັນໂສດ, ບໍ່ເຄີຍແຕ່ງງານມາກ່ອນ.
- ມີປະຫວັດດີ, ປະກອບອາຊີບຖືກຕ້ອງຕາມກົດໝາຍ.
- ມີສຸຂະພາບແຂງແຮງດີ, ບໍ່ເຄີຍຜ່ານການຜ່າຕັດແປງໂສມມາກ່ອນ(ບໍ່ເຄີຍເຮັດສັນຍະກຳ).
- ເປັນຜູ້ທີ່ມີຖິ່ນກຳເນີດ, ມີພູມລຳເນົາ ຢູ່ແຂວງຈຳປາສັກ.

**ມາດຕາ 4 ວ່າດ້ວຍອົງການຮັບຜິດຊອບການຄັດເລືອກ ນາງສາວຈຳປາສັກ.**

- ບັນດາເມືອງ 10 ເມືອງພາຍໃນແຂວງ ຕ້ອງໄດ້ຄັດເລືອກນາງສາວ ຈຳນວນ 02 ຄົນ ເພື່ອເປັນຕົວແທນຈາກເມືອງຂອງຕົນ ສົ່ງໃຫ້ຄະນະຮັບຜິດຊອບຈັດການປະກວດຂັ້ນແຂວງ ເພື່ອດຳເນີນການປະກວດໃນແຕ່ລະປີ.
- ບັນດາສະຖາບັນການສຶກສາວິຊາຊີບ, ໂຮງຮຽນສາມັນ(ໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍ), ພະແນກການ, ກົມກອງອ້ອມຂ້າງແຂວງ, ບໍລິສັດ, ຫ້າງຮ້ານ, ບຸກຄົນ ແລະ ນິຕິບຸກຄົນ ໃນຂອບເຂດທົ່ວແຂວງ ສາມາດຄັດເລືອກນາງສາວ ເພື່ອເປັນຕົວແທນຂອງຕົນ ສົ່ງໃຫ້ແກ່ຄະນະຮັບຜິດຊອບຈັດການປະກວດຂັ້ນແຂວງ ຕາມຄວາມເໝາະສົມ.

**ມາດຕາ 5 ວ່າດ້ວຍກຳນົດເວລາການຄັດເລືອກ ແລະ ການປະກວດ ນາງສາວຈຳປາສັກ.**

- ການຄັດເລືອກນາງສາວຈຳປາສັກ ຕາມມາດຕາ 4 ຂອງຄຳແນະນຳສະບັບນີ້ ຕ້ອງໃຫ້ສຳເລັດກ່ອນການປະກວດຢູ່ຂັ້ນແຂວງ, ໂດຍໃຫ້ພິມພັນລົງທະບຽນລາຍຊື່, ຊີວະປະຫວັດຫຍໍ້ ແລະ ລາຍລະອຽດອື່ນໆຂອງນາງສາວໄວ້ ແລ້ວນຳພານາງສາວມາສະເໜີຕົວ ຕໍ່ຄະນະຮັບຜິດຊອບຈັດການປະກວດຂັ້ນແຂວງ ກ່ອນທ້າຍເດືອນມີນາ ຂອງແຕ່ລະປີ.
- ການຈັດງານປະກວດນາງສາວຈຳປາສັກ ກຳນົດໃຫ້ຈັດຂຶ້ນ ປີລະ 01 ຄັ້ງ ຢູ່ເທດສະບານເມືອງປາກເຊ, ແຂວງຈຳປາສັກ, ໂດຍຈັດຂຶ້ນເນື່ອງໃນໂອກາດຕ້ອນຮັບວັນບຸນປີໃໝ່ລາວ ຫຼື ວັນສຳຄັນອື່ນໆຕາມຄວາມເໝາະສົມ.

**ມາດຕາ 6 ວ່າດ້ວຍຄະນະຮັບຜິດຊອບຈັດການປະກວດ ນາງສາວຈຳປາສັກ.**

- ເຈົ້າແຂວງ ຫຼື ຮອງເຈົ້າແຂວງ ຜູ້ຊີ້ນຳຂົງເຂດວັດທະນະທຳ-ສັງຄົມ ເປັນປະທານຄະນະຮັບຜິດຊອບຈັດການປະກວດນາງສາວຈຳປາສັກ ໃນແຕ່ລະປີ.
- ສຳລັບມາດຕະຖານ ແລະ ຂັ້ນຕອນຈັດການປະກວດ ນາງສາວຈຳປາສັກ ມອບໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ(ກອງເລຂາ ຄະນະຮັບຜິດຊອບຈັດການປະກວດ ນາງສາວຈຳປາສັກ) ຄົ້ນຄວ້າກຳນົດໃຫ້ລະອຽດ ແລະ ເໝາະສົມ ໃນແຕ່ລະປີ.

**ມາດຕາ 7 ວ່າດ້ວຍສ່ວນຮ່ວມຂອງສັງຄົມ ຕໍ່ການປະກວດນາງສາວຈຳປາສັກ.**

- ບັນດາພະແນກການ, ກົມກອງອ້ອມຂ້າງແຂວງ, ເມືອງ 10 ເມືອງ, ບໍລິສັດ, ຫ້າງຮ້ານ ຕະຫຼອດຮອດປະຊາຊົນທຸກຊັ້ນຄົນ ພາຍໃນແຂວງຈຳປາສັກ ຕ້ອງປະກອບສ່ວນເຫື່ອແຮງ, ສະຕິປັນຍາ ແລະ ທຶນຮອນ ໃຫ້ແກ່ການປະກວດນາງສາວຈຳປາສັກ ໃນແຕ່ລະປີ.

- ມອບໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດການປະກວດນາງສາວຈຳປາສັກ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ ໃນແຕ່ລະປີ.
- ຄະນະຮັບຜິດຊອບຈັດການປະກວດ ນາງສາວຈຳປາສັກ ສາມາດລະດົມທຶນ ຫຼື ຄົ້ນຄວ້າຫາຜູ້ອຸປະຖຳເພີ່ມຕື່ມໄດ້(ຖ້າຈຳເປັນ).

**ມາດຕາ 8 ວ່າດ້ວຍພັນທະຂອງນາງສາວຈຳປາສັກ.**

ນາງສາວຈຳປາສັກ ມີພັນທະໃນການປະຕິບັດ, ເຄົາລົບ ແລະ ເຜີຍແຜ່ວັດທະນະທຳ ຮີດຄອງປະເພນີອັນດີງາມ ຂອງແມ່ຍິງລາວ, ເພື່ອໃຫ້ສົມກັບຖານະບົດບາດ ການເປັນສັນຍະລັກແຫ່ງ ນາງສາວລາວ ກໍຄືນາງສາວຈຳປາສັກ ຢ່າງແທ້ຈິງ.

**ມາດຕາ 9 ວ່າດ້ວຍໜ້າທີ່ຂອງນາງສາວຈຳປາສັກ.**

ນາງສາວຈຳປາສັກ ມີໜ້າທີ່ດັ່ງນີ້:

- ປະກອບສ່ວນໂຄສະນາ ເຜີຍແຜ່ວັດທະນະທຳ, ຮີດຄອງປະເພນີ ແລະ ມູນເຊື້ອອັນດີງາມ ຂອງແມ່ຍິງລາວ ຊາວແຂວງຈຳປາສັກ, ພ້ອມນັ້ນ ກໍປະຕິບັດໜ້າທີ່ເປັນ ນາງທິດາສັນຍະລັກ ໃນງານບຸນປະເພນີທີ່ສຳຄັນຕ່າງໆຂອງແຂວງ ອີກດ້ວຍ.
- ເຄື່ອນໄຫວສ້າງຂະບວນການ ເພື່ອຮັບໃຊ້ສັງຄົມ ເນື່ອງໃນໂອກາດວັນສຳຄັນຕ່າງໆ ຂອງພັກ-ຂອງຊາດ ເຊັ່ນ: ລົງເຄື່ອນໄຫວອວຍພອນອ້າຍນ້ອງທະຫານ ຢູ່ແນວໜ້າຊາຍແດນ, ລົງໂຄສະນາເຜີຍແຜ່ ລະບຽບການຂັບຂີ່ລົດຈັກ ໃຫ້ຖືກກົດຈາລະຈອນ ຕາມໂຮງຮຽນສາມັນ ເພື່ອຫຼຸດຜ່ອນອຸບັດຕິເຫດ, ໂຄສະນາໃຫ້ຊາວໜຸ່ມໄວໜຸ່ມ ຕ້ານການຫຼິ້ນກິນຟຸມເຟືອຍ, ສ້າງກິດຈະກຳປູກຕົ້ນໄມ້, ກິດຈະກຳຢອດຢາວັກຊີນໃຫ້ເດັກນ້ອຍ, ລົງມອບເຄື່ອງຊ່ວຍເຫຼືອແກ່ຜູ້ປະສົບໄພພິບັດ ແລະ ຂະບວນການອື່ນໆ.
- ສຶກສາຄົ້ນຄວ້າ, ຊອກຮູ້ຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ຮີດຄອງປະເພນີອັນດີງາມ ເພື່ອປະກອບສ່ວນຍົກສູງບົດບາດຂອງແມ່ຍິງລາວ ໃຫ້ສູງຂຶ້ນ.

**ມາດຕາ 10 ວ່າດ້ວຍຂອບເຂດສິດ ຂອງນາງສາວຈຳປາສັກ.**

- ມີສິດໄດ້ຮັບຂອງຂວັນ, ລາງວັນ ຈາກການປະກວດໃນແຕ່ລະປີ.
- ມີສິດໄດ້ຮັບນະໂຍບາຍ, ຄ່າຕອບແທນ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ຕາມພາລະບົດບາດຂອງຕົນ.
- ມີສິດໄດ້ຮັບການຄຸ້ມຄອງ ດູແລ ແລະ ປົກປ້ອງຈາກການຈັດຕັ້ງ ແລະ ພາກສ່ວນຕ່າງໆໃນສັງຄົມ, ພ້ອມນັ້ນ ກໍມີສິດເຂົ້າຮ່ວມການປະກວດສາວງາມ ໃນລະດັບຊາດ, ພາກພື້ນ ແລະ ສາກົນອີກດ້ວຍ.

**ມາດຕາ 11 ວ່າດ້ວຍອົງການຄຸ້ມຄອງນາງສາວຈຳປາສັກ.**

- ມອບໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ປະຕິບັດໜ້າທີ່ເປັນອົງການຄຸ້ມຄອງນາງສາວຈຳປາສັກ, ໂດຍໃຫ້ແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງ ນຳພາດັກແມ່ ເຊິ່ງເອີ້ນວ່າແມ່ລ້ຽງ, ເພື່ອເຮັດໜ້າທີ່ສຶກສາອົບຮົມ ແລະ ນຳພານາງສາວຈາປາສັກ ເຄື່ອນໄຫວຖືກຕ້ອງຕາມພາລະບົດບາດ.
- ໃນໄລຍະທຸກໆ 03 ເດືອນ ແມ່ລ້ຽງ ແລະ ນາງສາວຈຳປາສັກ ຕ້ອງໄດ້ປະຊຸມສະຫຼຸບ ຜົນການເຄື່ອນໄຫວ ໃນໄລຍະຜ່ານມາ ເພື່ອຖອດຖອນບົດຮຽນດ້ານດີ, ດ້ານອ່ອນ ແລະ ວາງແຜນການເຄື່ອນໄຫວໃນ 3 ເດືອນຕໍ່ໜ້າ, ຫຼັງຈາກນັ້ນ ໃຫ້ແມ່ລ້ຽງເຂົ້າສ່ອງແສງລາຍງານ ໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ.

**ມາດຕາ 12** ວ່າດ້ວຍການເຄື່ອນໄຫວຂອງນາງສາວຈຳປາສັກ.

- ພາກສ່ວນຕ່າງໆຂອງສັງຄົມ ທັງພາກລັດ ແລະ ເອກະຊົນ ທີ່ມີຈຸດປະສົງຢາກເຊີນນາງສາວຈຳປາສັກ ໄປຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ ຕ້ອງໄດ້ສະເໜີຜ່ານ ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໃຫ້ຖືກຕ້ອງຕາມລະບຽບການ.
- ການເຄື່ອນໄຫວຂອງນາງສາວຈຳປາສັກ ແຕ່ລະຄັ້ງ ຈະມີແມ່ລ້ຽງຕິດຕາມຄຸ້ມຄອງດູແລ 02 ຄົນ, ມອບໃຫ້ພາກສ່ວນ ທີ່ເຊີນນາງສາວຈຳປາສັກ ໄປຮັບໃຊ້ ເປັນຜູ້ຮັບຜິດຊອບດ້ານນະໂຍບາຍຄ່າຕອບແທນໃຫ້ແກ່ນາງສາວ ແລະ ແມ່ລ້ຽງ ຕາມທີ່ກຳນົດໄວ້.
- ການເຄື່ອນໄຫວຮັບໃຊ້ວຽກງານທາງການ ທີ່ຄະນະພັກ-ອົງການປົກຄອງແຂວງ ຮຽກຮ້ອງນັ້ນ ນາງສາວຈຳປາສັກ ແລະ ແມ່ລ້ຽງ ຈະໄດ້ຮັບນະໂຍບາຍຕາມລະບຽບການຂອງລັດ ທີ່ກຳນົດໄວ້.
- ການຄິດໄລ່ຄ່າຕອບແທນ ໃນເວລາເຄື່ອນໄຫວຮັບໃຊ້ງານທາງການຂອງແຂວງ ປະຕິບັດດັ່ງນີ້:

  + ນາງສາວຈຳປາສັກ ອັນດັບທີ 1 ຫາ 7 ຄິດໄລ່: 120.000 ກີບຕໍ່ຄົນຕໍ່ຄັ້ງ(ລວມມີຄ່າແຮງງານ ແລະ ຄ່າແຕ່ງໜ້າ).
  + ແມ່ລ້ຽງຕິດຕາມ ຄິດໄລ່: 50.000 ກີບຕໍ່ຄົນຕໍ່ຄັ້ງ.
  + ນ້ຳມັນລົດຮັບ-ສົ່ງນາງສາວ ຄິດໄລ່: 200.000 ກີບຕໍ່ຄັ້ງ/ງານ ຫຼື ຕາມຄວາມເໝາະສົມ.
- ນາງສາວຈຳປາສັກ ອັນດັບທີ 1 ຫາ 7 ຈະໄດ້ຮັບຄ່າຕອບແທນ ໃນເວລາເຄື່ອນໄຫວຮັບໃຊ້ງານ ຂອງບໍລິສັດ, ລັດວິສາຫະກິດ ແມ່ນ: 300.000 ກີບຕໍ່ຄົນຕໍ່ຄັ້ງ ແລະ ມີຄ່ານ້ຳມັນລົດຮັບ-ສົ່ງນາງສາວ 200.000 ກີບຕໍ່ຄັ້ງ/ງານ ຫຼື ຕາມຄວາມເໝາະສົມ.

**ມາດຕາ 13** ວ່າດ້ວຍຂໍ້ຫ້າມ

- ຫ້າມທຸກພາກສ່ວນໃນສັງຄົມ ທັງພາກລັດ ແລະ ເອກະຊົນ ຈັດຕັ້ງການປະກວດນາງສາວ ຕາມລຳພັງ ໂດຍບໍ່ໄດ້ຮັບອະນຸຍາດ.
- ຫ້າມນາງສາວຈຳປາສັກ ເຄື່ອນໄຫວວຽກງານນອກແຜນ, ຫ້າມຖ່າຍແບບໂຄສະນາຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງນາງສາວ ທີ່ລະບຸໄວ້ໃນຄຳແນະນຳສະບັບນີ້ ຢ່າງເດັດຂາດ.
- ໃນໄລຍະທີ່ດຳລົງຕຳແໜ່ງເປັນນາງສາວຈຳປາສັກ ຫ້າມບໍ່ໃຫ້ຈັດງານໝັ້ນ, ງານແຕ່ງດອງຢ່າງເດັດຂາດ.
- ຫ້າມນາງສາວຈຳປາສັກ ນຸ່ງຖືບໍ່ສຸພາບ, ຍົ້ວຍວນ ແລະ ປະພຶດຕົນຜິດຕໍ່ວັດທະນະທຳ, ຮີດຄອງປະເພນີ ຂອງແມ່ຍິງລາວ ຢ່າງເດັດຂາດ.
- ຫ້າມນາງສາວຈຳປາສັກ ສະໝັກເຂົ້າປະກວດນາງສາວລາວ(ເວທີລະດັບຊາດ) ໃນນາມການຈັດຕັ້ງຂອງພາກສ່ວນອື່ນ ນອກຈາກເປັນຕົວແທນໃຫ້ແຂວງຈຳປາສັກ.

**ມາດຕາ 14** ວ່າດ້ວຍການຍ້ອງຍໍ.

- ທຸກພາກສ່ວນໃນສັງຄົມ ທີ່ເອົາໃຈໃສ່ປະກອບສ່ວນທາງດ້ານສະຕິປັນຍາ, ເຫື່ອແຮງ ແລະ ທຶນຮອນ ໃຫ້ແກ່ການຄັດເລືອກ, ການປະກວດ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງນາງສາວຈຳປາສັກ ແມ່ນຈະໄດ້ຮັບການຍ້ອງຍໍຊົມເຊີຍ ດ້ວຍຮູບການຕ່າງໆຢ່າງເໝາະສົມ.
- ນາງສາວຈຳປາສັກ ທີ່ເອົາໃຈໃສ່ເຄື່ອນໄຫວປະຕິບັດໜ້າທີ່ຂອງນາງສາວ ຢ່າງຕັ້ງໜ້າ ແລະ ມີຜົນສຳເລັດດີ, ໂດຍສອດຄ່ອງກັບຄຳແນະນຳສະບັບນີ້ ຈະໄດ້ຮັບການຍ້ອງຍໍສົມລະເສີນ ດ້ວຍຮູບການຕ່າງໆ ຢ່າງເໝາະສົມ.

**ມາດຕາ 15** ມາດຕະການຕໍ່ຜູ້ລະເມີດ.

- ບຸກຄົນ, ນິຕິບຸກຄົນ ທີ່ເຄື່ອນໄຫວຂັດກັບຄຳແນະນຳສະບັບນີ້ ຈະຖືກສຶກສາອົບຮົມກ່າວເຕືອນ, ດຳເນີນມາດຕະການ ໄປຕາມແຕ່ລະຂັ້ນຕອນຂອງລະບຽບການ ຢ່າງເຂັ້ມງວດ.

- ນາງສາວຈຳປາສັກ ທີ່ເຄື່ອນໄຫວ ຫຼື ປະພຶດຕົນຜິດຕໍ່ຄຳແນະນຳສະບັບນີ້ ຄັ້ງທຳອິດຈະໄດ້ຖືກສຶກສາອົບຮົມກ່າວເຕືອນ, ຫາກຍັງສືບຕໍ່ກະທຳຜິດຄັ້ງຕໍ່ໄປ ຈະຖືກຖອນຕຳແໜ່ງ-ມຸງກຸດ-ສາຍສະພາຍ ແລະ ປັບໃໝຕາມມູນຄ່າລາງວັນຂອງແຕ່ລະຕຳແໜ່ງ ທີ່ໄດ້ຮັບໃນເວລາປະກວດ, ໂດຍຈະເລື່ອນຜູ້ຮອງລົງມາ ຂຶ້ນຮັບຕຳແໜ່ງແທນ.

**ມາດຕາ 16** **ວ່າດ້ວຍການສິ້ນສຸດຕຳແໜ່ງນາງສາວຈຳປາສັກ.**

- ເຄື່ອນໄຫວ ຫຼື ປະພຶດຕົນຜິດຕໍ່ຄຳແນະນຳສະບັບນີ້ ເກີນສອງຄັ້ງ ຫຼື ກະທຳຜິດຮ້າຍແຮງຕໍ່ລະບຽບກົດໝາຍບ້ານເມືອງ.
- ເສຍອົງຄະ ຫຼື ເສຍຊີວິດກະທັນຫັນ ຈາກເຫດການໃດໜຶ່ງ, ຍົກຍ້າຍຖິ່ນຖານ ພູມລຳເນົາໄປຢູ່ຫ່າງໄກບໍ່ສາມາດເຄື່ອນໄຫວປະຕິບັດໜ້າທີ່ຕາມພາລະບົດບາດ ທີ່ກຳນົດໄວ້.
- ນາງສາວໄດ້ດຳລົງຕຳແໜ່ງຄົບວາລະແລ້ວ, ຈຶ່ງກະກຽມຈັດການປະກວດນາງສາວຈຳປາສັກ ຊຸດຕໍ່ໄປ.

**ມາດຕາ 17** ມອບໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນໃຈກາງປະສານກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 18** ພະແນກການ, ກົມກອງ, ເມືອງ 10 ເມືອງ, ສະຖາບັນການສຶກສາວິຊາຊີບ, ໂຮງຮຽນສາມັນ(ໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍ), ບໍລິສັດ, ຫ້າງຮ້ານ, ນິຕິບຸກຄົນ ແລະ ບຸກຄົນ ໃນຂອບເຂດທົ່ວແຂວງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ສະໜັບສະໜູນ ໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 19** ຄຳແນະນຳສະບັບນີ້ ໃຊ້ປ່ຽນແທນລະບຽບວ່າດ້ວຍການຄັດເລືອກ ການປະກວດ ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງນາງສາວຈຳປາສັກ ສະບັບເລກທີ 38/ຈຂ.ຈສ, ລົງວັນທີ 24/11/2010 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ປອ. ບຸນທອງ ດິວີໄຊ